Washington State Health Care Authority

Washington State Department of Social & Health Services
Transforming lives

# Washington Apple Health
## ສິດທິໃນການຟັງເຣື່ອງຈາກອຳນາດການປົກຄອງ ແລະ ວັນທີສຸດຂາດ
### Washington Apple Health Administrative Hearing Rights and Deadlines

ທ່ານມີສິດທິໃນການຟັງເຣື່ອງຈາກອຳນາດການປົກຄອງຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຄຳຕັດສິນຂອງພວກເຮົາທີ່ໄດ້ປະຕິເສດ, ສິ້ນສຸດລົງ, ຫລື ປ່ຽນແປງການຄຸ້ມກັນ Washington Apple Health ຂອງທ່ານ.

- ທ່ານມີເວລາ 90 ວັນຈາກວັນທີຢູ່ຂ້າງເທິງຂອງໃບແຈ້ງການໃບນີ້ທີ່ຈະຮ້ອງຂໍເອົາການຟັງເຣື່ອງ.
  ຖ້າຫາກວ່າທ່ານບໍ່ຮ້ອງຂໍເອົາການຟັງເຣື່ອງພາຍໃນ 90 ວັນ, ທ່ານຈະສູນເສັຽສິດທິໃນການຟັງເຣື່ອງຂອງທ່ານ.
- ຖ້າຫາກວ່າທ່ານຢາກຈະຮັກສາການຄຸ້ມກັນຂອງທ່ານຢູ່ຕໍ່ໄປໃນຣະຫວ່າງການດຳເນີນການຟັງເຣື່ອງອັນນີ້, ຈົ່ງເບິ່ງ **ການຄຸ້ມກັນທີ່ດຳເນີນຕໍ່ໄປໃນຣະຫວ່າງການດຳເນີນການຟັງເຣື່ອງຈາກອຳນາດການປົກຄອງ** ຢູ່ຂ້າງລຸ່ມນີ້.
- ທ່ານສາມາດກວດເບິ່ງກົດຣະບຽບຂອງການຟັງເຣື່ອງຄືນໄດ້ຢູ່ໃນກົດຫມາຍປົກຄອງຣັດວໍຊິງຕັນ (Washington Administrative Code) (WAC chapter 182-526.
- ທ່ານຈະບໍ່ມີສິດທິໃນການຟັງເຣື່ອງຖ້າຫາກວ່າການຄຸ້ມກັນຂອງທ່ານໄດ້ຖືກປະຕິເສດ, ສິ້ນສຸດລົງ, ຫລື ປ່ຽນແປງຍ້ອນການປ່ຽນແປງໃນກົດຫມາຍຂອງຣັດ ຫລື ຂອງຣັດຖະບານກາງ ແລະ ສະທ້ອນເຖິງທຸກໆຄົນຜູ້ທີ່ຈົດຊື່ເຂົ້າໃນໂຄງການຢ່າງອັດຕະໂນມັດຢູ່ໃນແບບດຽວກັນ (RCW 74.09.741(3)).
- ຖ້າຫາກວ່າທ່ານມີຄວາມຕ້ອງການດ້ານການປິ່ນປົວສຸຂະພາບສຸກເສີນ, ທ່ານຈະຮ້ອງຂໍເອົາການຟັງເຣື່ອງຮີບດ່ວນໄດ້ ແລະ ຕ້ອງຍື່ນຫລັກຖານພະຍານຂອງຄວາມຕ້ອງການ. ຜູ້ພິພາກສາຈະຕັດສິນວ່າທ່ານສາມາດໄດ້ຮັບການຟັງເຣື່ອງຮີບດ່ວນ ຫລື ບໍ່. ທ່ານຈະບໍ່ໄດ້ຮັບການຟັງເຣື່ອງຮີບດ່ວນຖ້າຫາກວ່າທ່ານໄດ້ຮັບການຄຸ້ມກັນທີ່ຖືກດຳເນີນຕໍ່ໄປ.

Coordinated Legal Education Advice and Referral (CLEAR) ອາດຈະຊ່ວຍເຫລືອທ່ານຊອກເອົາການຊ່ວຍເຫລືອທາງກົດຫມາຍຟຣີໄດ້ຖ້າຫາກວ່າທ່ານມີຣາຍໄດ້ຕ່ຳ. ທ່ານສາມາດສະມັກເອົາໄດ້ທີ່: http://nwjustice.org/clear-online, ຫລື:

- ຖ້າຫາກວ່າອາຍຸຕ່ຳກວ່າ 60 ປີ, ໂທຫາ CLEAR ໄດ້ທີ່ເລກ 1-888-201-1014.
- ຖ້າຫາກວ່າອາຍຸ 60 ປີ ຫລື ແກ່ກວ່າ, ໂທຫາ CLEAR Senior ໄດ້ທີ່ເລກ 1-888-387-7111.

## ການຄຸ້ມກັນທີ່ດຳເນີນຕໍ່ໄປໃນຣະຫວ່າງການດຳເນີນການຟັງເຣື່ອງຈາກອຳນາດການປົກຄອງ

- ທ່ານສາມາດຮັກສາການຄຸ້ມກັນຂອງທ່ານໄວ້ໄດ້ໃນຣະຫວ່າງການດຳເນີນການຟັງເຣື່ອງ ຖ້າຫາກວ່າໃບແຈ້ງການຂອງທ່ານກ່າວວ່າພວກເຮົາຈະຕັດ, ໂຈະໄວ້ຊົ່ວຄາວ ຫລື ລຸດຜ່ອນການຄຸ້ມກັນ Washington Apple Health ຂອງທ່ານ ຫລື ການບໍຣິການທີ່ຖືກອະນຸຍາດໃຫ້ໃນຜ່ານມາຂອງທ່ານ.
- ເພື່ອຈະຮັກສາການຄຸ້ມກັນຂອງທ່ານໄວ້, ທ່ານຕ້ອງໄດ້ຮ້ອງຂໍເອົາການຟັງເຣື່ອງກ່ອນວັນທີ 10 ຫລັງຈາກທີ່ພວກເຮົາໄດ້ສົ່ງໃບແຈ້ງການກະທຳໄປຫາທ່ານ ຫລື ວັນສຸດທ້າຍຂອງເດືອນທີ່ການກະທຳມີຜົນບັງຄັບໃຊ້ໄດ້.
- ຖ້າຫາກວ່າທ່ານໄດ້ຮັບການຄຸ້ມກັນ ຫລື ການບໍຣິການທີ່ດຳເນີນຕໍ່ໄປ ແລະ ຜ່າຍແພ້ການຟັງເຣື່ອງຂອງທ່ານ, ທ່ານຈະຕ້ອງໄດ້ຈ່າຍແທນຄືນຮອດ 60 ວັນຂອງການຄຸ້ມກັນ ຫລື ການບໍຣິການທີ່ຖືກດຳເນີນຕໍ່ໄປ (ເບິ່ງ WAC 182-504-0130).
- ທ່ານບໍ່ສາມາດໄດ້ຮັບການຄຸ້ມກັນໃນຂະນະລໍຖ້າການຟັງເຣື່ອງເພື່ອຈະຄັດຄ້ານການປະຕິເສດໃນຄຳຮ້ອງຂໍ Washington Apple Health ຂອງທ່ານ.

## ການຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງ

ເພື່ອຈະຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງ, ຫລື ຖ້າຫາກວ່າທ່ານຕ້ອງການນາຍແປພາສາ ຫລື ຄວາມຊ່ວຍເຫລືອຢ່າງອື່ນເພື່ອຈະຮ້ອງຂໍເອົາການຟັງເຣື່ອງ, ຈົ່ງເຮັດແນວນຶ່ງຂອງສິ່ງຕໍ່ລົງໄປນີ້:

- ໂທຫາສູນກາງປະຊາສັມພັນຂອງຫ້ອງການບໍຣິການຊຸມນຸມຊົນໄດ້ທີ່ 1-877-501-2233 ຫລື ໂທຫາຫ້ອງການບໍຣິການຢູ່ຕາມເຮືອນ ແລະ ຊຸມນຸມຊົນທ້ອງຖິ່ນ (Home and Community Service) (HCS) ຂອງທ່ານ.
- ໂທຫາຫນ່ວຍພິເສດຂອງ LTC ໄດ້ທີ່ 1-855-873-0642 ຫລື ໂທຫາຫ້ອງການປົກຄອງຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕທ້ອງຖິ່ນ (Developmental Disabilities Administration) (DDA) ຂອງທ່ານ.
- ຂຽນຫນັງສື ຫລື ຂຽນປະກອບຄຳຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງ HCA 12-507 (ຊຶ່ງມີໄວ້ໃຫ້ຢູ່ທີ່ http://www.hca.wa.gov/apple-health-client-forms) ແລະ:

  ແຟກຊ໌ໄປທີ່ 1-888-338-7410; ຫລື

  ສົ່ງໄປສະນີທີ່: CSD Customer Service Center PO Box 11699 Tacoma, WA 98411-6699

ຖ້າຫາກວ່າພວກເຮົາບໍ່ຮູ້ຈັກວ່າຈະຕິດຕໍ່ຫາໃຜ,ໂທຫາເລກໂທຢູ່ທາງຫນ້າທຳອິດຂອງຫນັງສືສະບັບນີ້.ພວກເຮົາຈະກວດເບິ່ງເອກສານຂອງທ່ານຄືນ ແລະ ພະຍາຍາມທີ່ຈະຕິດຕໍ່ຫາທ່ານເພື່ອຈະແກ້ໄຂບັນຫາກ່ອນການຟັງເຣື່ອງ.